**ກອງປະຊຸມປຶກສາຫາລືລະດັບວິຊາການຂອງໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ ປະຈຳປີ ພາຍໃຕ້ຂະບວນການກອງປະຊຸມໂຕະມົນ.**



ໃນວັນທີ 09 ຕຸລາ 2025 ທີ່ໂຮງແຮມເສດຖາພາເລດ, ນະຄອນຫຼວງວຽງຈັນ, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຈັດກອງປະຊຸມປຶກສາຫາລືລະດັບວິຊາການຂອງໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ (TPSWG) ປະຈຳປີ ພາຍໃຕ້ຂະບວນການກອງປະຊຸມໂຕະມົນ ໂດຍການເປັນປະທານຂອງ ທ່ານ ນາງ ລັດຕະນະພອນ ວົງສຸທິ, ຮອງຫົວໜ້າຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ປະທານຮ່ວມ ທ່ານ ນາງ Veerle SMET ຫົວໜ້າຝ່າຍການຮ່ວມມື, ສຳນັກງານຜູ້ຕາງໜ້າສະຫະພາບເອີຣົບ ປະຈຳ ສປປ ລາວ. ມີຜູ້ຕາງຫນ້າເຂົ້າຮ່ວມຈາກພາກລັດ, ເອກະຊົນ ແລະ ຄູ່ຮ່ວມພັດທະນາ. ຈຸດປະສົງຂອງກອງປະຊຸມ ແມ່ນ ເພື່ອປຶກສາຫາລືລະດັບວິຊາການ ເພື່ອກະກຽມໃຫ້ແກ່ກອງປະຊຸມລະດັບສູງຂອງໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ ແລະ ກອງປະຊຸມໂຕະມົນ ປະຈຳປີ 2025.



ທ່ານ ນາງ ລັດຕະນະພອນ ວົງສຸທີ, ໄດ້ກ່າວໃນກອງປະຊຸມວ່າ ການປຶກສາຫາລືໃນມື້ນີ້ ມີຄວາມສຳຄັນຫລາຍ ແລະ ເປັນການເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ມີສ່ວນຮ່ວມໃນການແລກປ່ຽນຄວາມຄິດເຫັນ, ສ້າງຄວາມເປັນເອກະພາບ ກ່ຽວກັບບັນຫາສະພາບແວດລ້ອມດ້ານການຄ້າ ແລະ ການລົງທຶນ ເພື່ອຄົ້ນຄວ້າວິທີທາງໃນການແກ້ໄຂໃຫ້ທັນເວລາ ເພື່ອບໍ່ໃຫ້ບັນຫາດັ່ງກ່າວກາຍເປັນຂໍ້ຈຳກັດ ໃຫ້ແກ່ການພັດທະນາ. ພາຍໃຕ້ການສະໜັບສະໜູນຂອງຄູ່ຮ່ວມພັດທະນາ, ພວກເຮົາໄດ້ສ້າງບັນດາຂອບດ້ານນະໂຍບາຍ ແລະ ສະຖາບັນ, ເຊິ່ງຄວາມພະຍາຍາມດັ່ງກ່າວ ໄດ້ຊ່ວຍໃຫ້ພວກເຮົາເຂົ້າໃຈ ແລະ ລົບລ້າງບັນຫາທີ່ເປັນສິ່ງກີດຂວາງ ໃຫ້ແກ່ການດຳເນີນທຸລະກິດ, ການຄ້າລະຫວ່າງປະເທດ ແລະ ການແຂ່ງຂັນ. ໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ, ສ້າງຕັ້ງຂຶ້ນພາຍໃຕ້ຂະບວນການໂຕະມົນ, ເພື່ອຮັບປະກັນການເຊື່ອມໂຍງກັບກົນໄກ ການປະສານງານອື່ນໆ ເຊັ່ນ: ໜ່ວຍງານຂະແໜງເສດຖະກິດມະຫາພາກ, ກົນໄກປຶກສາຫາລືລະຫວ່າງ ພາກລັດ ແລະ ພາກທຸລະກິດ ພາຍໃຕ້ກອງປະຊຸມທຸລະກິດລາວ, ຄະນະກຳມະການອຳນວຍຄວາມສະດວກດ້ານການຄ້າ ແລະ ການຂົນສົ່ງ ແຫ່ງຊາດ ແລະ ກົນໄກການປະສານງານອື່ນໆ. ໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ ຍັງເປັນເວທີໃຫ້ແກ່ການປຶກສາຫາລືດ້ານຍຸດທະສາດ ກ່ຽວກັບ ນະໂຍບາຍ ແລະ ການຈັດຕັ້ງປະຕິບັດວຽກງານ ທີ່ກ່ຽວຂ້ອງກັບການພັດພະທະນາຂະແໜງການຄ້າ, ພາກເອກະຊົນ, ແລະ ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ.




ໃນຕອນທ້າຍ, ທ່ານ ນາງ ລັດຕະນະພອນ ວົງສຸທີ, ຍັງໄດ້ກ່າວຕື່ມອີກວ່າ ໃນຮ່າງແຜນການພັດທະນາ 5 ປີ (2026-2030) ຂອງກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ເນັ້ນໃສ່ ບັນດາວຽກງານສຳຄັນເຊັ່ນ: ຊຸກຍູ້ການແຂ່ງຂັນອຸດສາຫະກຳ, ເພີ່ມທະວີການຄ້າ ແລະ ປັບປຸງການເຂົ້າເຖິງຕະຫຼາດ, ຊຸກຍູ້ການພັດທະນາພາກເອກະຊົນ. ຂ້າ




ພະເຈົ້າເຊື່ອໝັ້ນວ່າ ຄວາມພະຍາຍາມ ແລະ ການຮ່ວມມື ຂອງພາກລັດ, ພາກເອກະຊົນ, ແລະ ຄູ່ຮ່ວມພັດທະນາ, ພວກເຮົາຈະສາມາດສ້າງກາລະໂອກາດ ແລະ ຫຼຸດຜ່ອນບັນດາສິ່ງທ້າທາຍທີ່ເປັນອຸປະສັກໃນການພັດທະນາ ໃຫ້ແກ່ປະເທດພວກເຮົາ. ພາກເອກະຊົນ ທີ່ຂັບເຄື່ອນໂດຍຂະແໜງການຄ້າ ເປັນປັດໃຈສຳຄັນ ໃນການພັດທະນາ ແລະ ເຕີບໂຕທາງສດຖະກິດແບບຍືນຍົງ. ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 9 (NSEDP), ຍຸດທະສາດການພັດທະນາແຫ່ງຊາດ 2025, ວິໄສທັດ 2030 ແລະ ຍຸດທະສາດຂອງຂະແໜງການອື່ນໆ, ໄດ້ຮັບຮູ້ເຖິງບົດບາດອັນສຳຄັນຂອງພາກເອກະຊົນ ໃນການສ້າງວຽກເຮັດງານທຳ ແລະ ຫຼຸດຜ່ອນຄວາມທຸກຍາກ, ເຊິ່ງເປັນຕົວຂັບເຄື່ອນໃຫ້ແກ່ການເຕີບໂຕແບບຍືນຍົງ.